# ບົດສະເໜີບັນຫາເພື່ອປຶກສາຫາລື ລະຫວ່າງຂະແໜງການທີ່ກ່ຽວຂ້ອງຂອງພາກລັດ ແລະ ພາກທຸລະກິດ

## (ບັນຫາທີ່ຕິດພັນ ກັບການກໍ່ຕັ້ງ ແລະ ດຳເນີນທຸລະກິດ)

ສາລະບານ


1. ບັນຫາ ການກໍ່ຕັ້ງທຸລະກິດ ມີຂັ້ນຕອນຫຍຸ້ງຍາກ .......................................................... 2

2. ບັນຫາ ການດຳເນີນທຸລະກິດຄ້າຂາຍ ແລະ ບໍລິການ ທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍ ແລະ/ຫຼື ບໍ່ມີໃບອະນຸຍາດດຳເນີນທຸລະກິດ.......................................................................... 5

3.ການບໍລິການຂໍ້ມູນກ່ຽວກັບວິສາຫະກິດ ໃນ ສປປ ລາວ........................................................ 7

## 1. ບັນຫາ ການກໍ່ຕັ້ງທຸລະກິດ ມີຂັ້ນຕອນຫຍຸ້ງຍາກ

<u>ສະພາບບັນຫາ:</u> ສືບເນື່ອງຈາກການສະເໜີບັນຫາຂອງພາກທຸລະກິດ ຕໍ່ ການຂຶ້ນທະບຽນວິສາຫະກິດ ແລະ ຂໍໃບອະນຸຍາດດໍາເນີນທຸລະກິດ ມີຄວາມຊັກຊ້າ ທີ່ໄດ້ສະເໜີໃນກອງປະຊຸມທຸລະກິດລາວໃນຄັ້ງຜ່ານມານັ້ນ, ຜ່ານມາພາກທຸລະກິດ ເຫັນວ່າ ຂະແໜງການກ່ຽວຂ້ອງຂອງພາກລັດ ໄດ້ເອົາໃຈໃສ່ປັບປຸງ ຂັ້ນຕອນການຂຶ້ນທະບຽນວິສາຫະກິດ ໃຫ້ສະດວກ ແລະ ວ່ອງໄວຂຶ້ນຫຼາຍ ເປັນຕົ້ນແມ່ນ ການຂຶ້ນທະບຽນວິສາຫະກິດ ພາຍໃນ 5-10 ວັນລັດຖະການ, ການອອກເລກປະຈໍາຕົວຜູ້ເສຍອາກອນພ້ອມກັບໃບວິສາຫະກິດ, ການຍົກເລີກຂໍອະນຸຍາດຄວັດກາປະທັບ ແລະ ປ້າຍຊື່ວິສາຫະກິດ, ການຫຼຸດຂັ້ນຕອນການຈົດທະບຽນແຮງງານ ແລະ ຂັ້ນຕອນການກວດສອບປະຫວັດຜູ້ລົງທຶນ, ແລະການ ຮັບຮອງເອົາກິດຈະການອຸດສາຫະກໍາ ແລະການຄ້າ ທີ່ຕ້ອງອອກອະນຸຍາດດໍາເນີນທຸລະກິດ ທີ່ເຮັດໃຫ້ການຂຶ້ນທະບຽນວິສາຫະກິດມີຄວາມສະດວກຂຶ້ນ. ແຕ່ເຖິງຢ່າງໃດກໍ່ຕາມ ໃນການກໍ່ຕັ້ງທຸລະກິດ ຫຼັງຈາກຂຶ້ນທະບຽນວິສາຫະກິດແລ້ວ ກໍ່ຍັງຕ້ອງຂໍອະນຸຍາດດໍາເນີນທຸລະກິດກັບຂະແໜງການທີ່ກ່ຽວຂ້ອງ ຈິ່ງສາມາດດໍາເນີນທຸລະກິດໄດ້, ເຊິ່ງຜ່ານມາ ໃນຂັ້ນຕອນການຂໍໃບອະນຸຍາດດໍາເນີນທຸລະກິດ ເຫັນວ່າຍັງເປັນສິ່ງທ້າທາຍຫຼາຍ. ຜູ້ປະກອບການສ່ວນໃຫຍ່ຍັງເຫັນວ່າ ຂັ້ນຕອນການຂໍໃບອະນຸຍາດດໍາເນີນທຸລະກິດກັບຂະແໜງການກ່ຽວຂ້ອງ ແມ່ນຍັງບໍ່ຈະແຈ້ງ, ໃຊ້ເວລາດົນ ແລະ ມີການຮຽກຮ້ອງເອົາເງື່ອນໄຂທີ່ຫຼາຍເກີນໄປ ແລະ ບໍ່ສົມເຫດສົມຜົນ ເຊັ່ນ:

- ຫຼາຍຂະແໜງການ ຍັງບໍ່ມີລະບຽບການສະເພາະ ຫຼືຂັ້ນຕອນທີ່ຈະແຈ້ງ ແລະ ການກໍານົດໄລຍະເວລາທີ່ແນ່ນອນ ໃນການອອກໃບອະນຸຍາດດໍາເນີນທຸລະກິດ ຈິ່ງເຮັດໃຫ້ການອອກອະນຸຍາດດໍາເນີນທຸລະກິດ ມີຄວາມຊັກຊ້າ. ນອກຈາກນີ້ ລະບົບການຮັບຄໍາຮ້ອງ ແລະ ການລາຍງານພາຍໃນບາງກະຊວງທີ່ອອກໃບອະນຸຍາດດໍາເນີນທຸລະກິດ ມີຫລາຍຂັ້ນຕອນເກີນໄປ ເຊັ່ນ: ຄໍາຮ້ອງຍື່ນຫາຫ້ອງການກະຊວງເພື່ອຄົ້ນຄວ້າ - ເມື່ອຄົ້ນຄວ້າແລ້ວຫ້ອງການກະຊວງສົ່ງໃຫ້ກົມທີ່ກ່ຽວຂ້ອງຄົ້ນຄວ້າ ແລະ ມີຄໍາເຫັນ - ເມື່ອກົມກ່ຽວຂ້ອງຄົ້ນຄວ້າແລ້ວສົ່ງກັບຄືນໄປຫາຫ້ອງການກະຊວງ ຈາກນັ້ນຫ້ອງການກະຊວງເຮັດບົດລາຍງານຫາທ່ານລັດຖະມົນຕີເພື່ອພິຈາລະນາ ແລະ ຕົກລົງອອກອະນຸຍາດດໍາເນີນທຸລະກິດ ເມື່ອທ່ານລັດຖະມົນຕີເຫັນດີ - ຈາກນັ້ນທ່ານລັດຖະມົນຕີຈະສົ່ງຄໍາຮ້ອງກັບມາຫາກົມທີ່ກ່ຽວຂ້ອງເປັນຜູ້ອອກໃບອະນຸຍາດດໍາເນີນ ທຸລະກິດ
- ການອອກເລກປະຈໍາຕົວຜູ້ເສຍອາກອນໃຫ້ແກ່ຫ້ອງການຜູ້ຕາງໜ້າແມ່ນຍັງຄຸມເຄືອ ເນື່ອງຈາກວ່າຫ້ອງການຜູ້ຕາງໜ້າບໍ່ມີໃບທະບຽນວິສາຫະກິດ, ແຕ່ການອອກເລກປະຈໍາຕົວຜູ້ເສຍອາກອນແມ່ນອອກພ້ອມດຽວກັນກັບໃບທະບຽນວິສາຫະກິດ, ສະນັ້ນ ໃນເມື່ອຫ້ອງການຜູ້ຕາງໜ້າບໍ່ມີໃບທະບຽນວິສາຫະກິດແລ້ວ ຂັ້ນຕອນການອອກເລກປະຈໍາຕົວຜູ້ເສຍອາກອນຂອງຫ້ອງການຜູ້ຕາງໜ້າ ແມ່ນ ບໍ່ຊັດເຈນ,
- ຂັ້ນຕອນການຂໍໃບອະນຸຍາດລົງທຶນ ສໍາລັບວິສາຫະກິດທີ່ດໍາເນີນກິດຈະການຢູ່ແລ້ວ ເຊິ່ງກ່ອນໜ້ານີ້ ແມ່ນບໍ່ໄດ້ຢູ່ໃນກິດຈະການຄວບຄຸມ, ແຕ່ກິດຈະການທີ່ດໍາເນີນຢູ່ ແມ່ນຢູ່ພາຍໃຕ້ ບັນຊີກິດຈະການຄວບຄຸມ ຕາມດໍາລັດ ເລກທີ 03/ນຍ ລົງວັນທີ 10 ມັງກອນ 2019, ແມ່ນຍັງບໍ່ຈະແຈ້ງ ແລະ ຊັກຊ້າ,
- ຂັ້ນຕອນການບໍລິການຂອງຫ້ອງການປະຕູດຽວ, ກະຊວງແຜນການແລະການລົງທຶນ ຍັງຊັກຊ້າ ແລະ ເຫັນວ່າຊໍ້າຊ້ອນ: ປະຈຸບັນ ສໍາລັບກິດຈະການທີ່ນອນຢູ່ໃນບັນຊີຄວບຄຸມ ຜູ້ປະກອບການຕ້ອງໄປຫາຫ້ອງການປະຕູດຽວເພື່ອຂໍໃບອະນຸຍາດລົງທຶນ, ເຊິ່ງໃນການຂໍໃບອະນຸຍາດລົງທຶນ ຫ້ອງການປະຕູດຽວກໍ່ໄດ້ຂໍຄໍາເຫັນຈາກຂະແໜງການທີ່ກ່ຽວຂ້ອງຄົ້ນຄວ້າ ກ່ອນອອກໃບອະນຸຍາດລົງທຶນຢູ່ແລ້ວ, ແຕ່ເວລາໄດ້ໃບອະນຸຍາດລົງທຶນແລ້ວ ຜູ້ປະກອບການ ແມ່ນຕ້ອງໄດ້ໄປຂຶ້ນທະບຽນວິສາຫະກິດ ກັບກະຊວງ ອຄ, ຫຼັງຈາກ

ນັ້ນ ຕ້ອງໄດ້ໄປຂໍໃບອະນຸຍາດດຳເນີນທຸລະກິດກັບຂະແໜງການທີ່ກ່ຽວຂ້ອງ, ເຊິ່ງກໍ່ຕ້ອງໄດ້ຜ່ານຂັ້ນຕອນຄົ້ນຄວ້າຂອງຂະແໜງການກ່ຽວຂ້ອງຕື່ມອີກ ຈຶ່ງເຫັນວ່າຊໍ້າຊ້ອນ, ແລະຜູ້ປະກອບການ ແມ່ນດຳເນີນຂັ້ນຕອນແລ່ນເອກະສານເອງ.

- ໃນຂັ້ນຕອນການຂຶ້ນທະບຽນວິສາຫະກິດ ແລະ ການຂໍອະນຸຍາດດຳເນີນທຸລະກິດຢູ່ຂັ້ນທ້ອງຖິ່ນ ຍັງບໍ່ໄດ້ຖືກປັບປຸງໄປຕາມຂັ້ນຕອນ ແລະ ໄລຍະເວລາທີ່ຂັ້ນສູນກາງ ໄດ້ກຳນົດ.
- ຜູ້ປະກອບການ ໂດຍສະເພາະແມ່ນນັກລົງທຶນຕ່າງປະເທດ ທີ່ຕ້ອງການກໍ່ຕັ້ງ ທຸລະກິດຢູ່ ສປປ ລາວ ເຫັນວ່າການເຂົ້າຫາຂໍ້ມູນທີ່ຕິດພັນກັບການກໍ່ຕັ້ງທຸລະກິດ ໃນ ສປປ ລາວ ຍັງຈຳກັດ, ໂດຍສະເພາະ ແມ່ນ ຂໍ້ມູນກົດລະບຽບຕ່າງໆທີ່ອອກໃໝ່ແຕ່ລະໄລຍະ, ເງື່ອນໄຂທຶນຈົດທະບຽນຕໍ່າສຸດທີ່ກຳນົດໂດຍຂະແໜງການຕ່າງໆ ຍັງບໍ່ຊັດເຈນ.

ດັ່ງນັ້ນ ພາກທຸລະກິດ ເຫັນວ່າ ການປັບປຸງຂັ້ນຕອນການຂຶ້ນທະບຽນວິສາຫະກິດໃຫ້ສະດວກຂຶ້ນ ເຖິງຈະສາມາດຕອບໂຈດຕາມການໃຫ້ຄະແນນຕາມດັດສະນີຄວາມສະດວກຂອງການດຳເນີນທຸລະກິດ (Ease of Doing Business) ກໍ່ຕາມ, ແຕ່ໃນຕົວຈິງແມ່ນຍັງບໍ່ສາມາດຕອບໂຈດຄວາມຈຳເປັນໃນການສ້າງເງື່ອນໄຂສະດວກສຳລັບການກໍ່ຕັ້ງທຸລະກິດ ໃນ ສປປ ລາວ ໄດ້ຢ່າງແທ້ຈິງ.

**ຂໍ້ສະເໜີວິທີແກ້ໄຂ**

1. ສະເໜີໃຫ້ ກະຊວງອຸດສາຫະກຳ ແລະ ການຄ້າ ເປັນເຈົ້າການປະສານກັບກະຊວງທີ່ກ່ຽວຂ້ອງ ໃນການປັບປຸງຂັ້ນຕອນການອອກໃບອະນຸຍາດດຳເນີນທຸລະກິດ ໃຫ້ມີຄວາມຈະແຈ້ງ ແລະສະດວກ.
2. ພິຈາລະນາ ນຳໃຊ້ແບບຟອມດຽວກັນທີ່ຜູ້ລົງທຶນຍື່ນຫາກະຊວງອຸດສາຫະກຳ ແລະ ການຄ້າເພື່ອຂຶ້ນທະບຽນວິສາຫະກິດ ໃນການອອກໃບອະນຸຍາດດຳເນີນທຸລະກິດ, ແລະ ຕັດການຮຽກຮ້ອງເອົາເອກະສານທີ່ບໍ່ຈຳເປັນອອກຕື່ມອີກ.
3. ສຳລັບ ການອອກເລກປະຈຳຕົວຜູ້ເສຍອາກອນໃຫ້ແກ່ຫ້ອງການຜູ້ຕາງໜ້າ, ສະເໜີໃຫ້ ກະຊວງແຜນການ ແລະ ການລົງທຶນ ແລະ ກົມສ່ວຍສາອາກອນ ປະສານສົມທົບກັນໂດຍການເຊື່ອມຕໍ່ລະບົບເຂົ້າຫາກັນ ເຊັ່ນດຽວກັນກັບກະຊວງ ອຄ, ເນື່ອງຈາກ ກະຊວງແຜນການ ແລະ ການລົງທຶນ ເປັນໜ່ວຍງານທີ່ອອກໃບອະນຸຍາດສ້າງຕັ້ງຫ້ອງການຜູ້ຕາງໜ້າ ກໍ່ຄວນສາມາດພິມເລກປະຈຳຕົວຜູ້ເສຍອາກອນໃສ່ໃບອະນຸຍາດສ້າງຕັ້ງຫ້ອງການຜູ້ຕາງໜ້ານັ້ນເລີຍ.
4. ສະເໜີໃຫ້ຂະແໜງການທີ່ກ່ຽວຂ້ອງ ປັບປຸງລະບົບການອອກໃບອະນຸຍາດດຳເນີນທຸລະກິດໃຫ້ໄວຂຶ້ນ ດ້ວຍການຕັດບາງຂັ້ນຕອນການພິຈາລະນາອອກ ເຊັ່ນ ຂັ້ນຕອນການພິຈາລະນາຂອງຫ້ອງການກະຊວງ, ໝາຍຄວາມວ່າຄຳຮ້ອງຂໍໃບອະນຸຍາດດຳເນີນທຸລະກິດແມ່ນຄວນໃຫ້ສົ່ງເຖິງກົມກ່ຽວຂ້ອງໂດຍກົງເພື່ອຄົ້ນຄວ້າພິຈາລະນາ ແລະກົມກ່ຽວຂ້ອງຍື່ນສະເໜີຫາລັດຖະມົນຕີເພື່ອອະນຸມັດ ໂດຍບໍ່ຕ້ອງຜ່ານຫ້ອງການກະຊວງຕື່ມອີກ.
5. ສຳລັບກິດຈະການທີ່ຢູ່ໃນບັນຊີ ຄວບຄຸມ, ໃນຂັ້ນຕອນການຂໍໃບອະນຸຍາດດຳເນີນທຸລະກິດ ຄວນໃຫ້ສາມາດຄັດຕິດໃບຄຳເຫັນຈາກຂະແໜງການກ່ຽວຂ້ອງທີ່ໄດ້ຈາກຂັ້ນຕອນການຂໍໃບອະນຸຍາດລົງທຶນເລີຍເພື່ອໃຫ້ການອອກໃບອະນຸຍາດດຳເນີນທຸລະກິດ ວ່ອງໄວຂຶ້ນ

6. ສະເໜີໃຫ້ຂະແໜງການທີ່ກ່ຽວຂ້ອງ ພິຈາລະນາຄືນ ກ່ຽວກັບ ກິດຈະການທີ່ຢູ່ໃນບັນຊີກິດຈະການຄວບຄຸມ, ເນື່ອງຈາກ ເຫັນວ່າຍັງມີການຈໍາກັດຫຼາຍເກີນໄປ ແລະ ບໍ່ເປັນການດຶງດູດການລົງທຶນຈາກຕ່າງປະເທດເທົ່າທີ່ຄວນ.
7. ຈັດຕັ້ງປະຕິບັດ ຂັ້ນຕອນການຂຶ້ນທະບຽນວິສາຫະກິດ ແລະ ການອອກໃບອະນຸຍາດດໍາເນີນທຸລະກິດໃຫ້ເປັນເອກະພາບກັນທັງຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ.
8. ມີຊ່ອງທາງໃນການເຂົ້າເຖິງຂໍ້ມູນຂັ້ນຕອນ, ເງື່ອນໄຂ ແລະ ຂໍ້ກໍານົດຕ່າງໆຂອງຂະແໜງການກ່ຽວຂ້ອງທີ່ຕິດພັນກັບການກໍ່ຕັ້ງທຸລະກິດທີ່ສາມາດເຂົ້າເຖິງໄດ້ງ່າຍ ໂດຍສະເພາະແມ່ນ ແບບ ອອນລາຍ, ຫຼືນໍາໃຊ້ຕົວກາງໃນການກະຈາຍຂໍ້ມູນເຫຼົ່ານັ້ນໃຫ້ພາກທຸລະກິດ ເຊັ່ນ ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດລາວ ແລະ ສະພາການຄ້າຕ່າງປະເທດ ໃນສປປ ລາວ ເປັນຕົ້ນ.

**ຂະແໜງການທີ່ກ່ຽວຂ້ອງຂອງພາກລັດ**

1. ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງ ອຄ
2. ກົມສົ່ງເສີມການລົງທຶນ, ກະຊວງແຜນການ ແລະ ການລົງທຶນ
3. ຂະແໜງການອື່ນໆ ທີ່ອອກອະນຸຍາດດໍາເນີນທຸລະກິດ

**2. ບັນຫາ ການດຳເນີນທຸລະກິດຄ້າຂາຍ ແລະ ບໍລິການ ທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍ ແລະ/ຫຼື ບໍ່ມີໃບອະນຸຍາດດຳເນີນທຸລະກິດ**

<u>ສະພາບບັນຫາ:</u> ປະຈຸບັນຍັງມີຜູ້ປະກອບການ ທີ່ເຄື່ອນໄຫວທຸລະກິດຄ້າຂາຍ ແລະ ການບໍລິການ ທີ່ບໍ່ຖືກຕ້ອງ, ບໍ່ມີທະບຽນ ຫຼືບໍ່ໄດ້ເສຍພັນທະໃຫ້ລັດຖະບານຢ່າງຖືກຕ້ອງ ທັງທົ່ວໄປແລະຜ່ານທາງສື່ສັງຄົມອອນລາຍ ຢ່າງຫຼວງຫຼາຍ. ຜ່ານມາເຫັນວ່າ ການເຄື່ອນໄຫວທຸລະກິດຢ່າງບໍ່ຖືກຕ້ອງຕາມລະບຽບກົດໝາຍ ມີຫຼາຍຮູບແບບ ເຊັ່ນ ມີຊາວຕ່າງປະເທດຫຼວງຫຼາຍ ທີ່ປະກອບອາຊີບ ຂາຍຍົກ-ຂາຍຍ່ອຍ ຢ່າງບໍ່ຖືກຕ້ອງສອດຄ່ອງກັບຂໍ້ຕົກລົງຂອງກະຊວງອຸດສາຫະກຳການຄ້າ ວ່າດ້ວຍທຸລະກິດການຄ້າຂາຍຍົກ ແລະການຄ້າຂາຍຍ່ອຍຂາຍຍ່ອຍ ເລກທີ 1005/ອຄ.ຄພນ ລົງວັນທີ 22 ເດືອນ 5 ປີ 2015, ມີການຂາຍສິນຄ້າທີ່ນຳເຂົ້າຈາກຕ່າງປະເທດໂດຍບໍ່ໄດ້ຕິດສະຫຼາກສິນຄ້າເປັນພາສາລາວ ຕາມທີ່ໄດ້ກຳນົດໃນ ຄຳສັ່ງຂອງລັດຖະມົນຕີກະຊວງ ອຄ ເລກທີ 2501/ອຄ.ຄພນ ລົງວັນທີ 16/12/2015 ກ່ຽວກັບການຕິດສະຫຼາກສິນຄ້າເປັນພາສາລາວ, ມີການຄ້າຂາຍສິນຄ້າທີ່ມີຜົນກະທົບຕໍ່ສຸຂະພາບ ແຕ່ບໍ່ໄດ້ຕິດຄຳເຕືອນກ່ຽວກັບສຸຂະພາບໃສ່ການຫຸ້ມຫໍ່ ຕາມທີ່ກະຊວງສາທາລະນະສຸກກຳນົດ, ມີການໃຫ້ບໍລິການໂດຍ ຜູ້ປະກອບການທີ່ບໍ່ໄດ້ຂຶ້ນທະບຽນ ຫຼື ບໍ່ມີໃບອະນຸຍາດດຳເນີນທຸລະກິດ ເປັນຕົ້ນ. ການຄ້າຂາຍສິນຄ້າ ແລະການໃຫ້ບໍລິການ

ທີ່ບໍ່ຖືກຕ້ອງຕາມກົດລະບຽບ-ກົດໝາຍເຫຼົ່ານີ້ ໄດ້ສົ່ງຜົນກະທົບຮຸນແຮງ ແລະເກີດມີການແຂ່ງຂັນທີ່ບໍ່ເປັນທຳຕໍ່ຜູ້ປະກອບການທີ່ປະຕິບັດຖືກຕ້ອງຕາມກົດລະບຽບ-ກົດໝາຍໃນ ສປປ ລາວ, ລວມໄປເຖິງຜົນກະທົບຕໍ່ລາຍຮັບຂອງລັດຖະບານ.

**ຕົວຢ່າງ** ການຄ້າຂາຍ, ການສະໜອງ, ການຈັດສົ່ງ ແລະ ການຈັດຈຳໜ່າຍຢາສູບເຖື່ອນ ຫຼື ຢາສູບປອມ ທີ່ບໍ່ໄດ້ເສຍພັນທະພາສີ-ອາກອນ ມີຄື: <u>ປະເພດ 1:</u> ແມ່ນການນຳເຂົ້າສຳລັບການຈຳໜ່າຍທີ່ໄດ້ເສຍພາສີ-ອາກອນ ເຊັ່ນ: ພາສີຂາເຂົ້າ, ອາກອນຊົມໃຊ້ແລະອາກອນມູນຄ່າເພີ່ມ ທີ່ໄດ້ຊຳລະເປັນພຽງບາງສ່ວນ ຫຼື ບໍ່ໄດ້ເສຍທັງໝົດ; <u>ປະເພດ 2:</u> ແມ່ນການນຳເຂົ້າສຳລັບມາຈຳໜ່າຍໃນຮ້ານຄ້າປອດພາສີ ແລະ ສູບຮົ່ວໄຫຼເຂົ້າສູ່ຕະຫຼາດພາຍໃນທີ່ບໍ່ໄດ້ເສຍພາສີ-ອາກອນຕາມຈຳນວນທີ່ນຳເຂົ້າມາເພື່ອຂາຍພາຍໃນ; <u>ປະເພດ 3:</u> ແມ່ນຜະລິດຕະພັນຢາສູບທີ່ຮຽນແບບ(ຢາສູບປອມ) ຊຶ່ງມີຈຸດປະສົງເຮັດໃຫ້ມີຄວາມຄ້າຍຄືກັບຜະລິດຕະພັນທີ່ແທ້ຈິງ. ອີກໜຶ່ງສາເຫດຫຼັກຂອງການເພີ່ມຂຶ້ນຜະລິດຕະພັນຢາສູບນອກລະບົບນີ້ ແມ່ນພາຍຫຼັງກະຊວງສາທາລະນະສຸກ ໄດ້ອອກຂໍ້ຕົກລົງວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຄວບຄຸມຢາສູບ ເວົ້າລວມ, ເວົ້າສະເພາະກໍແມ່ນການພິມຄຳເຕືອນສຸຂະພາບໃສ່ຊອງຢາສູບ (ດຳລັດວ່າດ້ວຍການພິມຄຳເຕືອນກ່ຽວກັບສຸຂະພາບ ໃສ່ວັດຖຸຫຸ້ມຫໍ່ຜະລິດຕະພັນຢາສູບ), ເຫັນວ່າຜະລິດຕະພັນຢາສູບນອກລະບົບ ບໍ່ປະຕິບັດຕາມກົດລະບຽບດັ່ງກ່າວ ຈຶ່ງເຮັດໃຫ້ຜູ້ບໍລິໂພກຫັນມາຊົມໃຊ້ຜະລິດຕະພັນດັ່ງກ່າວຫຼາຍຂຶ້ນ. ຜ່ານມາເຫັນວ່າໄດ້ມີຢາສູບເຖື່ອນ ຈຳນວນຫຼາຍທີ່ພົບເຫັນວາງຈຳໜ່າຍຢູ່ໃນຫຼາຍຮ້ານຄ້າຂາຍຍ່ອຍ, ເຊິ່ງບໍ່ມີຄຳເຕືອນສຸຂະພາບກວມເອົາຕາມອັດຕາສ່ວນທີ່ກະຊວງສາທາລະນະສຸກໄດ້ກຳນົດ, ບໍ່ມີສະຫຼາກເປັນພາສາລາວ ແລະ ບໍ່ມີສະແຕມອາກອນ.

<u>ຂໍ້ສະເໜີວິທີແກ້ໄຂ:</u>

1. ສະເໜີໃຫ້ກະຊວງອຸດສາຫະກຳແລະການຄ້າ ປະເມີນຄືນ ປະສິດທິຜົນຂອງການຈັດຕັ້ງປະຕິບັດ ຂໍ້ຕົກລົງກະຊວງອຸດສາຫະກຳການຄ້າທຸລະກິດຂາຍຍົກຂາຍຍ່ອຍ ເລກທີ 1005/ອຄ.ຄພນ ລົງວັນທີ 22 ເດືອນ 5 ປີ 2015

2. ສະເໜີໃຫ້ກະຊວງອຸດສາຫະກຳແລະການຄ້າ ເຜີຍແຜ່ ການຈັດຕັ້ງປະຕິບັດ ແລະ ປະເມີນຄືນ ປະສິດຕິພາບຂອງການຈັດຕັ້ງປະຕິບັດ ຄຳແນະນຳຂອງກະຊວງ ອຄ ກ່ຽວກັບການແກ້ໄຂບັນຫາຄົນຕ່າງປະເທດເຄື່ອນໄຫວດຳເນີນທຸລະກິດບໍ່ຖືກຕ້ອງຕາມລະບຽບກົດໝາຍຂອງ ສປປ ລາວ ເລກທີ 0651/ອຄ.ກຄພນ ລົງວັນທີ 12 ມິຖຸນາ 2019.
3. ສະເໜີ ໃຫ້ກະຊວງອຸດສາຫະກຳ ແລະການຄ້າ ມີການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍການແຂ່ງຂັນທາງທຸລະກິດ, ເລກທີ 60/ສພຊ, ລົງວັນທີ 14 ກໍລະກົດ 2015,
4. ສະເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງ ເພີ່ມທະວີວຽກງານການລົງກວດກາ ແລະ ປະຕິບັດມາດຕະການຕໍ່ຜູ້ລະເມີດຢ່າງເຂັ້ມງວດ, ຖ້າພົບເຫັນການລະເມີດ (ຜູ້ນຳເຂົ້າ, ຜູ້ຈັດຈຳໜ່າຍ, ແລະ ຕົວແທນຈຳໜ່າຍ, ຜູ້ໃຫ້ບໍລິການ ສິນຄ້າ ຫຼື ການບໍລິການປະຕິບັດບໍ່ຖືກຕ້ອງຕາມລະບຽບກົດໝາຍ) ຄວນອອກໃບກ່າວຄວາມຜິດຕໍ່ຜູ້ລະເມີດ ແລະດຳເນີນມາດຕະການລົງໂທດຢ່າງເຂັ້ມງວດ ລວມໄປເຖິງການອອກຖະແຫຼງຂ່າວທີ່ໜັກແໜ້ນ ເພື່ອສ້າງຄວາມຮັບຮູ້ໃຫ້ແກ່ສັງຄົມ ທັງສ້າງຄວາມເຊື່ອໝັ້ນທາງການຄ້າ.
5. ມີໜ່ວຍງານພາຍໃຕ້ກະຊວງອຸດສາຫະກຳ ແລະການຄ້າ ເພື່ອຮັບຄຳຮ້ອງຟ້ອງ ຕໍ່ກັບການດຳເນີນທຸລະກິດຄ້າຂາຍ ແລະ ບໍລິການ ທີ່ບໍ່ຖືກຕ້ອງຕາມລະບຽບກົດໝາຍ ແລະ/ຫຼື ບໍ່ມີໃບອະນຸຍາດດຳເນີນທຸລະກິດ ເພື່ອຕິດຕາມການຮ້ອງຟ້ອງແຕ່ລະກໍລະນີ ຢ່າງເປັນລະບົບ.
6. ແກ້ໄຂບັນຫາການກໍ່ຕັ້ງທຸລະກິດ ແລະການຈັດຕັ້ງປະຕິບັດກົດໝາຍ ແລະນິຕິກຳລຸ່ມກົດໝາຍ ທີ່ຕິດພັນກັບກົດໝາຍສົ່ງເສີມການລົງທຶນ ຈະຊ່ວຍແກ້ໄຂບັນຫານີ້ໃນໄລຍະຍາວ.

**ຂະແໜງການທີ່ກ່ຽວຂ້ອງຂອງພາກລັດ**

1. ກົມການຄ້າພາຍໃນ, ກະຊວງ ອຄ
2. ກົມການນຳເຂົ້າ ແລະ ສົ່ງອອກ, ກະຊວງ ອຄ
3. ກົມພາສີ, ກະຊວງການເງິນ
4. ກົມສ່ວຍສາອາກອນ, ກະຊວງການເງິນ

## 3.ການບໍລິການຂໍ້ມູນກ່ຽວກັບວິສາຫະກິດ ໃນ ສປປ ລາວ

ສະພາບບັນຫາ: ປະຈຸບັນການຄົ້ນຫາຂໍ້ມູນວິສາຫະກິດ ໃນ ສປປ ລາວ ຍັງມີຂໍ້ຈຳກັດ ຈຶ່ງເປັນສາເຫດໃຫ້ການຕັດສິນໃຈລົງທຶນໃນຂະແໜງການທຸລະກິດໃດໜຶ່ງ ໃນ ສປປ ລາວ ເປັນໄປໄດ້ຍາກ, ເນື່ອງຈາກຜູ້ລົງທຶນບໍ່ສາມາດເຂົ້າຫາຂໍ້ມູນດັ່ງກ່າວ ຈຶ່ງບໍ່ສາມາດປະເມີນຕະຫຼາດ ແລະ ຄູ່ແຂ່ງໃນຕະຫຼາດໄດ້. ຂໍ້ຈຳກັດດັ່ງກ່າວ ເຫັນວ່າບໍ່ສົ່ງເສີມໃຫ້ມີການລົງທຶນໃນ ສປປ ລາວ ໃຫ້ຫຼາຍຂຶ້ນ ເທົ່າທີ່ຄວນ.

**ຂໍ້ສະເໜີວິທີແກ້ໄຂ**

1. ສະເໜີໃຫ້ກົມທະບຽນ ແລະ ຄຸ້ມຄອງ ວິສາຫະກິດ ປັບປຸງຖານຂໍ້ມູນ ແລະເວບໄຊທ໌ ກ່ຽວກັບຂໍ້ມູນວິສາຫະກິດໃນ ສປປ ລາວ ໃຫ້ສາມາດເຂົ້າເຖິງ ແລະນຳໃຊ້ໄດ້ງ່າຍ ແລະ ມີຂໍ້ມູນທີ່ຄົບຖ້ວນ ໂດຍສະເພາະແມ່ນຂໍ້ມູນຈຳນວນ ແລະ ລາຍຊື່ວິສາຫະກິດ ທີ່ປະກອບການໃນແຕ່ລະຂະແໜງການ ໃນແຕ່ລະພື້ນທີ່, ພ້ອມທັງເຜີຍແຜ່ວິທີການນຳໃຊ້ລະບົບຖານຂໍ້ມູນດັ່ງກ່າວໃຫ້ພາກທຸລະກິດຮັບຊາບ.

**ຂະແໜງການທີ່ກ່ຽວຂ້ອງຂອງພາກລັດ**

1. ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງ ອຄ